# ນ້ຳໃຈກວ້າງເໝືອນດັ່ງສາຍຂອງ

ສາຍນະທີຈາກຟ້າ ຂອງຍາວຊົ່ວສຸດຕາ
ມາຈາກດິນແດນຈີນ ຕີເບດພູເຂົາກ້າ
ນາວາໄຫຼລົງໃຕ້ ເໜືອໃກບໍ່ຢຸດຢ່ອນ
ບໍ່ຮ່ອນປຸນປຽບໄດ້ ນ້ຳໃຈກ້າຄ່າສູງ

ສົມໃຈນາງມາດມຸ້ງ ທຸກຄົນດ່ວນມາຫາ
ຫຼັ່ງນ້ຳຕາແທນຄວາມຮັກ ສລັກລົງໃຈໄວ້
ທົ່ງສວັດເຫັນເມັ່ງໃຫ້ ຢາກປອບໃຈເວົ້າບໍ່ອອກ
ຢາກບອກເມັ່ງ ບອກບໍ່ໄດ້ ເລີຍມາໃຫ້ຊ່ອຍກັນ ຊ້ຳນໍ

ຂັນເງິນນາງເພິ່ນໄດ້ສ້າງ ສະພານໄຕ່ໃຫ້ມາເຖິງ
ແສນລົ້ນເລິງບາດມາລວມ ແຕ່ຮ່ວມກັນເວລານ້ອຍ
ຈິດໃຈພອຍຄອຍຄວາມເສົ້າ ເຫງົາໃຈບາດຊິຈາກ
ມາຝາກຄວາມຮັກໄວ້ ເຫັນແລ້ວພັດຫ່າງໃກ ອີກແລ້ວ

ທຸກຄົນຈາລຶກໄວ້ ເຖິງອ້າຍໄຫຍ່ທົ່ງສວັດ
ຈັດຊື່ລຽນເປັນລຳດັບ ຮັບທຸກຄົນໃນງານນີ້
ມີບັນຊີອ້າຍຂຽນໄວ້ ໃຜເມືອມາຮູ້ລະອຽດ
ສາມວັນສຸດຍຽດຕັ້ງ ນັ່ງລໍຖ້າຢູ່ເດີ່ນຍືນ

ຈັບບັນຊີຊອກຄົ້ນ ຍິນຄັນກ່ອນຫຼືຄັນຫຼັງ
ນັ່ງຖ້າກັນຢ່າງມີສຸກ ທຸກບໍ່ມີໃຜເວົ້າ
ຄັນວ່າຖາມເຖິງເຂົ້າ ກິນບໍ່ກິນອ້າຍກໍອີ່ມ
ເຫັນເມັຽຍິ້ມອ້າຍກໍຍິ້ມ ເຫັນເມັຽໃຫ້ອ້າຍກໍໃຫ້ ຫົວໃຈນັ້ນແມ່ນຫນ່ວຍດຽວ ແທ້ນໍ

ຜົວເມັຽຈິດກ່ອມກ້ຽວ ກົມກ່ຽວຈຶ່ງສຳເລັດ
ເດັດດ່ຽວໃຈລວມປະສານ ຈຶ່ງຜ່ານງານໃນຄາວນີ້
ພວກເຮົາມີຂອງຂວັນໃຫ້ ນ້ຳຕາໄຫຼເປັນຂອງຝາກ
ຍາກຊິປຸນປຽບໄດ້ ນ້ຳໃຈກວ້າກວ່າທະເລ

ເງິນຄຳໄຫຼຫຼັ່ງເທ້ ເທມາໃສ່ເປັນກອງ
ເຫມືອນນ້ຳຂອງທີ່ລິນໄຫຼ ໃຫ້ຊື່ນໃຈຄອງສ້າງ
ຂໍໃຫ້ສົມໃຈຕັ້ງ ຫວັງອັນໃດກໍໃຫ້ເກີດ
ພອນປະເສີດ ຢູ່ໃນພື້ນແຜ່ນຫຼ້າ ຕະພິກວ້າງໃຫ້ຫຼັ່ງມາ ທ່ານເອີຍ

ໂດຍ : ສາວຫຼັກເຈັດ